ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ


**ກະຊວງສາທາລະນະສຸກ**

ກົມອາຫານ ແລະ ຢາ

ເບີໂທ/ແຟັກ: 021 214013-14 / 021 213495


14297

ເລກທີ: /ກອຢ

ນະຄອນຫຼວງວຽງຈັນ, ວັນທີ 19 DEC 2022

## ໜັງສືແຈ້ງການ

**ເຖິງ:** ທ່ານ ຜູ້ອຳນວຍການບໍລິສັດນຳເຂົ້າອາຫານ.

**ເລື່ອງ:** ແຈ້ງການເປີດນຳໃຊ້ລະບົບແຈ້ງພາສີປະຕູດຽວ (Lao National Single Window - LNSW) ໃນການອອກອະນຸຍາດນຳເຂົ້າອາຫານແບບອີເລັກໂທຣນິກ.

- ອີງຕາມ ກົດໝາຍວ່າດ້ວຍອາຫານ ສະບັບເລກທີ 33/ສພຊ, ລົງວັນທີ 23 ກໍລະກົດ 2013;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການອະນຸມັດນຳໃຊ້ລະບົບແຈ້ງພາສີປະຕູດຽວ ສະບັບເລກທີ 0204/ກງ, ລົງວັນທີ 15 ມັງກອນ 2019;
- ອີງຕາມ ການຄົ້ນຄວ້າ ແລະ ເຫັນດີຂອງກົມອາຫານ ແລະ ຢາ.

ກົມອາຫານ ແລະ ຢາ, ກະຊວງສາທາລະນະສຸກ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ: ເພື່ອເປັນການປະຕິບັດບັນດານະໂຍບາຍຂອງລັດຖະບານໃນການປັບປຸງສະພາບແວດລ້ອມ, ການດຳເນີນທຸລະກິດໃຫ້ມີຄວາມສະດວກຍິ່ງຂຶ້ນ, ຊ່ວຍຫຼີກເວັ້ນການລ່າຊ້າທີ່ບໍ່ຈຳເປັນ ແລະ ສິ້ນເປືອງຊັບພະຍາກອນຕ່າງໆ ດ້ວຍການຫັນຈາກລະບົບເຈ້ຍ ມາເປັນລະບົບອີເລັກໂທຣນິກ ເພື່ອອຳນວຍຄວາມສະດວກໃຫ້ການອະນຸຍາດນຳເຂົ້າອາຫານມີຄວາມວ່ອງໄວຂຶ້ນ ພ້ອມທັງອຳນວຍຄວາມສະດວກທາງດ້ານການຄ້າ; ກົມອາຫານ ແລະ ຢາ ຈະໄດ້ເລີ່ມຈັດຕັ້ງປະຕິບັດການອອກອະນຸຍາດນຳເຂົ້າອາຫານຜ່ານລະບົບແຈ້ງພາສີປະຕູດຽວ, ຊຶ່ງຈະຈັດຕັ້ງປະຕິບັດໃນ 5 ແຂວງຄື: ນະຄອນຫຼວງວຽງຈັນ, ແຂວງ ຄຳມ່ວນ, ສະຫວັນນະເຂດ, ຈຳປາສັກ ແລະ ຫຼວງນ້ຳທາ ເລີ່ມເປີດນຳໃຊ້ແຕ່ວັນທີ **09 ມັງກອນ 2023** ເປັນຕົ້ນໄປ ໂດຍຜ່ານເວບໄຊ www.laonsw.net; ສະນັ້ນ, ຈຶ່ງແຈ້ງມາຍັງບັນດາບໍລິສັດນຳເຂົ້າອາຫານໃຫ້ຮີບຮ້ອນສະເໜີ ຫາ ກົມພາສີ ເພື່ອຂໍລະຫັດຜູ້ນຳໃຊ້ລະບົບດັ່ງກ່າວ ໂດຍປະກອບເອກະສານຕາມແບບຟອມເອກະສານຊ້ອນທ້າຍ 2 ຂອງບົດແນະນຳວ່າດ້ວຍການນຳໃຊ້ລະບົບແຈ້ງພາສີປະຕູດຽວ, ສະບັບເລກທີ 4217/ກງ, ລົງວັນທີ 28 ທັນວາ 2018.

ໃນໄລຍະເລີ່ມຕົ້ນການນຳໃຊ້ລະບົບແຈ້ງພາສີ ບໍລິສັດສາມາດສືບຕໍ່ສະເໜີຂໍອອກໃບອະນຸຍາດນຳເຂົ້າແບບເກົ່າ (ລະບົບເຈ້ຍ) ຈົນກວ່າຈະມີໜັງສືແຈ້ງໃຫ້ນຳໃຊ້ລະບົບໃໝ່ໂດຍສົມບູນ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງ ທ່ານ ເພື່ອຊາບ ແລະ ຂໍຄວາມຮ່ວມມືໃນການຈັດຕັ້ງປະຕິບັດດ້ວຍ.

**ຫົວໜ້າກົມ**

ກະຊວງສາທາລະນະສຸກ ກົມອາຫານ ແລະ ຢາ

ປອ. ດຣ. ບຸນຮູ ແກ້ວທາວົງ


สแกนด้วย CamScanner